ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

# ຄະນະນຳ ທຫລ ເຂົ້າຮ່ວມກອງປະຊຸມແຈ້ງຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ




ໃນວັນທີ 5 ກຸມພາ 2026 ສະຫາຍ ນ. ບຸນຄຳ ວໍລະຈິດ ເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຜູ້ວ່າການ ທຫລ ໄດ້ນຳພາຄະນະນຳຂອງ ທຫລ ຈຳນວນ 17 ສະຫາຍ ເຂົ້າຮ່ວມກອງປະຊຸມແຈ້ງຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ ທີ່ຫໍປະຊຸມແຫ່ງຊາດ ພາຍໃຕ້ການເປັນປະທານຮ່ວມຂອງ ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ແລະ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ເພື່ອເປັນການແຈ້ງໃຫ້ພະນັກງານການນຳຂັ້ນສູງ, ພະນັກງານນຳພາຫຼັກແຫຼ່ງ ກໍ່ຄືປະຊາຊົນລາວ ໄດ້ຮັບຊາບ ຕໍ່ກັບໝາກຜົນທີ່ຍາດມາໄດ້ຂອງພັກກອມມູນິດຫວຽດນາມ ຕະຫຼອດສະໄໝທີ XIII ແລະ ກຳນົດທິດທາງກ້າວເດີນໃນຕໍ່ໜ້າ ໃນການສ້າງສາ ແລະ ພັດທະນາປະເທດ ສສ.ຫວຽດນາມ ພາຍໃຕ້ການນຳພາຂອງຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສະໄໝທີ XIV. ໃນທີ່ປະຊຸມ, ສະຫາຍ ໂຕ ເລິມ ໄດ້ແຈ້ງໃຫ້ ສະຫາຍ ທອງລຸນ ສີສຸລິດ ແລະ ບັນດາສະຫາຍການນຳຂັ້ນສູງ ຂອງ ສປປ ລາວ ຊາບເຖິງຜົນສຳເລັດອັນພົ້ນເດັ່ນຂອງການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ ໂດຍໄດ້ຍົກໃຫ້ເຫັນເຖິງຄວາມໝາຍຄວາມສຳຄັນຂອງກອງປະຊຸມໃຫຍ່ຄັ້ງນີ້ ພາຍໃຕ້ຄຳຂວັນ “ກ້າວໄປສູ່ໄລຍະໃໝ່ຂອງການພັດທະນາປະເທດຊາດ, ການສົ່ງເສີມການເພິ່ງຕົນເອງ, ການພົ່ງພາຕົນເອງ, ການພັດທະນາແບບຍືນຍົງ, ການເຊື່ອມໂຍງຢ່າງເລິກເຊິ່ງ ແລະ ການເສີມຂະຫຍາຍບົດບາດສາກົນຂອງຫວຽດນາມໃນ

ທົດສະວັດຕໍ່ໄປ”. ກອງປະຊຸມດັ່ງກ່າວ ໄດ້ສະຫຼຸບສັງລວມຜົນການຈັດຕັ້ງປະຕິບັດການປ່ຽນແປງໃໝ່ໄລຍະ 40 ປີຜ່ານມາ, ຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ທົ່ວປະເທດ ຄັ້ງທີ XIII ຂອງພັກ, ການກຳນົດແຜນພັດທະນາເສດຖະກິດ-ສັງຄົມໄລຍະ 2026-2030, ການກຳນົດແຜນຍຸດທະສາດຮອດປີ 2035 ແລະ ວິໄສທັດຮອດປີ 2045.

ພ້ອມດຽວກັນນັ້ນ, ກອງປະຊຸມໃຫຍ່ ໄດ້ດຳເນີນການເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກສະໄໝທີ XIV, ເລືອກຕັ້ງເອົາ ສະຫາຍ ໂຕ ເລິມ ເປັນເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ສະໄໝທີ XIV. ຫຼັງຈາກນັ້ນ, ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ໄດ້ປະກອບຄຳເຫັນຕໍ່ຜົນສຳເລັດຂອງກອງປະຊຸມໃຫຍ່ດັ່ງກ່າວ, ໂດຍຕີລາຄາສູງຕໍ່ຜົນສຳເລັດຢ່າງຈົບງາມຂອງກອງປະຊຸມໃຫຍ່ຄັ້ງນີ້, ຊຶ່ງເປັນເຫດການທາງການເມືອງທີ່ສຳຄັນ ແລະ ເປັນຈຸດປ່ຽນທາງຍຸດທະສາດສຳລັບການພັດທະນາປະເທດຊາດຫວຽດນາມໃນໄລຍະໃໝ່, ພ້ອມທັງສ້າງປະເທດຫວຽດນາມ ໃຫ້ເປັນປະເທດສັງຄົມນິຍົມທີ່ສະຫງົບສຸກ, ເປັນເອກະລາດ, ປະຊາທິປະໄຕ, ຈະເລີນຮຸ່ງເຮືອງ ແລະ ມີຄວາມຜາສຸກ.

**ຂ່າວ-ພາບ: ຫ້ອງການ ທຫລ**